ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງ ສະຫວັນນະເຂດ

ເລກທີ...411.../ຈຂ.ສຂ
ສະຫວັນນະເຂດ, ວັນທີ..06 ມີນາ 2023..

# ຂໍ້ຕົກລົງ
# ວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ(ສະບັບປັບປຸງ)ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບເລກທີ 20/ສພຊ, ລົງວັນທີ 09 ພຶດສະພາ 2017;
- ອີງຕາມ ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ, ສະບັບເລກທີ05/ສພຂ.ສຂ, ລົງວັນທີ 26 ມັງກອນ 2023 ວ່າດ້ວຍການຮັບຮອງຂໍ້ຕົກລົງວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ;

## ເຈົ້າແຂວງຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວຕິດຕາມ, ກວດກາຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ, ເພື່ອເຮັດໃຫ້ທຸກພາກສ່ວນ ອົງການຈັດຕັ້ງພາກລັດ, ສັງຄົມ, ຜູ້ປະກອບການ, ທຸກຊັ້ນຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາລົງຊີວິດ ເຄື່ອນໄຫວຢູ່ແຂວງສະຫວັນນະເຂດ ມີຄວາມຮັບຮູ້ເຂົ້າໃຈຕໍ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ແນໃສ່ເຮັດໃຫ້ການເກີດອັກຄີໄພ ຫຼຸດໜ້ອຍຖອຍລົງ.

**ມາດຕາ 2 ຄວາມໝາຍຄວາມສໍາຄັນຂອງການສະກັດກັ້ນ ແລະ ຕ້ານອັກຄີໄພ**

ເມື່ອສັງຄົມມີການພັດທະນາ, ເສດຖະກິດຂະຫຍາຍຕົວສູງ ຄວາມຮຽກຮ້ອງຕ້ອງການໃນການນໍາໃຊ້ໄຟຟ້າ, ທາດເຄມີ, ທາດລະເບີດ, ນໍ້າມັນເຊື້ອໄຟ, ອາຍແກັສ, ວັດຖຸອື່ນໆ ທີ່ພາໃຫ້ໄຟໄໝ້ງ່າຍ ໃນກໍລະນີເກີດອັກຄີໄພແລ້ວ ໄຟສາມາດແຜ່ນລາມໄດ້ງ່າຍ, ສ້າງຜົນເສຍຫາຍສູງ ສະນັ້ນ, ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຈຶ່ງມີຄວາມສໍາຄັນ ແລະ ແມ່ນພັນທະຂອງ ສັງຄົມ, ຕ້ອງຮັບຮູ້, ເຂົ້າໃຈ, ມີຄວາມຮັບຜິດຊອບເພື່ອປົກປັກຮັກສາຊັບສິນຂອງລັດ, ຂອງລວມໝູ່, ຂອງພົນລະເມືອງ ບໍ່ໃຫ້ເກີດອັກຄີໄພ.

**ມາດຕາ 3 ອະທິບາຍຄໍາສັບ**

- **ຕ້ານອັກຄີໄພ** ໝາຍເຖິງການນໍາໃຊ້ກໍາລັງວິຊາສະເພາະ, ພາຫະນະ, ອຸປະກອນ, ເຕັກນິກເຂົ້າໃນການດັບມອດໄຟ;

- **ສະກັດກັ້ນອັກຄີໄພ** ໝາຍເຖິງການວາງແຜນປ້ອງກັນອັກຄີໄພໄວ້ລ່ວງໜ້າ ດ້ວຍການສ້າງລະບົບປ້ອງກັນອັກຄີໄພ, ການນຳໃຊ້ມາດຕະການຕ່າງໆ ເຊັ່ນ: ການໂຄສະນາສຶກສາອົບຮົມ;
- **ອັກຄີໄພ** ໝາຍເຖິງໄພອັນຕະລາຍທີ່ເກີດຈາກໄຟໄໝ້;
- **ກຳລັງ** ໝາຍເຖິງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ກຳລັງສະກັດກັ້ນຕ້ານອັກຄີໄພຂອງສຳນັກງານ, ອົງການຂອງບ້ານ;
- **ພາຫະນະ** ໝາຍເຖິງລົດ ທີ່ນຳໃຊ້ເຂົ້າໃນການຕ້ານອັກຄີໄພ;
- **ອາຄານເກົ່າ** ໝາຍເຖິງອາຄານທີ່ໄດ້ຜ່ານການນຳໃຊ້ມາກ່ອນ;
- **ອາຄານໃໝ່** ໝາຍເຖິງອາຄານທີ່ປຸກສ້າງໃໝ່ ຫຼື ອາຄານທີ່ປຸກສ້າງໃໝ່ຍັງບໍ່ທັນໄດ້ຖືກນຳໃຊ້;
- **ບັ້ງມອດໄຟ** ໝາຍເຖິງອຸປະກອນມອດໄຟທັນສະໄໝ;
- **ເຄມີໂຟມ** ໝາຍເຖິງ ນ້ຳຢາໂຟມປະສົມນ້ຳ;
- **ສຳນັກງານ-ອົງການ** ໝາຍເຖິງ ການຈັດຕັ້ງຂອງລັດ, ຫົວໜ່ວຍທຸລະກິດ;
- **ກ໋ອກນ້ຳສຸກເສີນ** ໝາຍເຖິງ ຕູ້ນ້ຳທີ່ຕິດຕັ້ງໄວ້ໃນຕຶກອາຄານ;
- **ກ໋ອກນ້ຳສະປິງເກີ້** ໝາຍເຖິງ ກ໋ອກນ້ຳມອດໄຟອັດຕະໂນມັດ ທີ່ຕິດຕັ້ງໄວ້ຕາມເພດານຂອງຕຶກ, ອາຄານ;
- **ກຳລັງຂອງບ້ານ** ໝາຍເຖິງ ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມກົດໝາຍ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງຂັ້ນແຂວງ, ເມືອງ, ນະຄອນ, ອົງການຈັດຕັ້ງບ້ານ ສົ່ງເສີມ ອຳນວຍຄວາມສະດວກ, ພັດທະນາກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພໃຫ້ກ້າວໜ້າທັນສະໄໝ ທັງປຸກລະດົມທົ່ວປວງຊົນຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ປະກອບສ່ວນກຳລັງ, ພາຫະນະ, ອຸປະກອນ, ແຫຼ່ງນ້ຳ ແລະ ຊັບສິນເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນ, ປະຕິບັດໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພຕ້ອງໄດ້ຮັບການຍ້ອງຍໍ ປະຕິບັດນະໂຍບາຍອື່ນໆ ຢ່າງເໝາະສົມຕາມກົດໝາຍ.

**ມາດຕາ 5 ຫຼັກການ ຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ**

ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ກອງບັນຊາການ ປກສ ແຂວງ ຄຸ້ມຄອງມະຫາພາກກ່ຽວກັບວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດທົ່ວແຂວງສະຫວັນນະເຂດ.

ກອງຈະລາຈອນ ແລະ ມອດໄຟ ກອງບັນຊາການ ປກສ ເມືອງ, ນະຄອນ, ຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພໃນຂອບເຂດ ເມືອງ, ນະຄອນທີ່ຕົນຮັບຜິດຊອບ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະກັດກັ້ນ ແລະ ຕ້ານອັກຄີໄພ, ນຳໃຊ້ເປັນບ່ອນອີງໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວນຳໃຊ້ຕຶກ, ອາຄານ, ສຳນັກງານ, ການດຳເນີນທຸລະກິດ ກ່ຽວກັບອຸປະກອນຮັບໃຊ້ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຢູ່ພາຍໃນແຂວງ ສະຫວັນນະເຂດ.

**ມາດຕາ 7 ການຮ່ວມມືກັບສາກົນ**

1. ກອງບັນຊາການ ປກສ ແຂວງ, ກອງບັນຊາການ ປກສ ເມືອງ, ນະຄອນ ທີ່ມີຊາຍແດນຕິດຈອດກັບຕ່າງປະເທດ ໃນກໍລະນີຫາກເກີດອັກຄີໄພ ແລະ ບໍ່ສາມາດຄວບຄຸມໄຟໄດ້, ພາຫະນະອຸປະກອນມອດໄຟບໍ່ພຽງພໍ ສາມາດປະສານສົມທົບບັນດາແຂວງ ຫຼື ເມືອງຂອງປະເທດ ທີ່ມີຊາຍແດນຕິດຈອດກັນ ເພື່ອຂໍຄວາມຊ່ວຍເຫຼືອໃນການຕ້ານອັກຄີໄພ;
2. ກໍລະນີອຸປະກອນມອດໄພຫາກບໍ່ພຽງພໍ, ບໍ່ມີຂາຍ ຫຼື ຈຳໜ່າຍພາຍໃນປະເທດ ກອງບັນຊາການ ປກສ ແຂວງ, ປກສ ເມືອງ, ປກສ ນະຄອນ ສາມາດປະສານສົມທົບ ຂໍຄວາມຊ່ວຍເຫຼືອນຳເຂົ້າອຸປະກອນດັ່ງກ່າວຈາກຕ່າງປະເທດ.

# ໝວດທີ 2

## ກຳລັງ, ປະເພດອຸປະກອນ, ມາດຕະຖານການຕິດຕັ້ງອຸປະກອນ

**ມາດຕາ 8. ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພປະກອບມີ:

1. ກຳງລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ປກສ ແຂວງ, ປກສ ເມືອງ, ປກສ ນະຄອນ.

2. ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງການຈັດຕັ້ງພາກລັດ - ເອກະຊົນ, ຫົວໜ່ວຍທຸລະກິດ ແລະ ກຳລັງຂອງບ້ານ ຕ້ອງເປັນບຸກຄົນທີ່ມີຄວາມຕື່ນຕົວສະມັກໃຈ, ມີອາຍຸແຕ່ 18 ປີຂຶ້ນໄປ, ມີສຸຂະພາບແຂງແຮງ.

**ມາດຕາ 9 ປະເພດອຸປະກອນມອດໄຟ**

ປະເພດອຸປະກອນກອນມອດໄຟປະກອບມີດັ່ງນີ້:

1. ຕູ້ໃສ່ອຸປະກອນມອດໄຟສຸກເສີນປະກອບມີ: ບັ້ງມອດໄຟ, ສາຍສີດ, ຫົວສີດ, ຄ້ອນຕີ, ຂວານ, ຄີມຕັດເຫຼັກ, ເຫຼັກສະແລັງ.
2. ນ້ຳ
3. ເຄມີໂຟມ
4. ຖົງຊາຍ
5. ຊວ້ານ
6. ອ່າງເກັບນ້ຳ1,000 ລິດຂຶ້ນໄປ
7. ກ່ອກນ້ຳສຸກເສີນ
8. ກ່ອກນ້ຳມອດໄຟອັດຕາໂນມັດ(ສະປິງເກີ້)
9. ກ່ອກລົດມອດໄພ
10. ທໍ່ຢາງ
11. ເຄື່ອງດັກຈັບຄວັນ ແລະ ເຄື່ອງມືອື່ນໆທີ່ກ່ຽວຂ້ອງກັບອັກຄີໄພ.

**ມາດຕາ 10 ມາດຖານການຕິດຕັ້ງອຸປະກອນມອດໄຟ**

ມາດຖານການຕິດຕັ້ງອຸປະກອນມອດໄຟມີດັ່ງນີ້:

1. ເຮືອນຢູ່ອາໃສ, ຮ້ານອາຫານເຮືອນແພ, ເຮືອຂົນສົ່ງຜູ້ໂດຍສານ-ເຮືອຂົນສົ່ງສິນຄ້າ, ຫ້ອງເຊົ່າ, ສໍານັກງານ-ອົງການ, ອາຄານທຸກຊະນິດ(ລວມທັງວັດ,ໂບດ), ຕ້ອງຕິດຕັ້ງອຸປະກອນບັ້ງມອດໄຟຂະໜາດ 6,8 ກິໂລກຣາມໃນເນື້ອທີ 20 ຕາແມັດ ຕໍ່ 01 ບັ້ງ;

2. ໂຮງແຮມ, ສູນການຄ້າ, ສະຖານທີ່ບັນເທີງ ຕ້ອງມີຕູ້ໃສ່ກ໊ອກນ້ຳມອດໄຟ ພ້ອມອຸປະກອນຮັບໃຊ້ຄື: ຂວານ, ຄ້ອນຕີ, ຄີມຕັດເຫຼັກ, ໄລຍະຫ່າງຂອງຕູ້ 60 ຕາແມັດ ຕໍ່ 01 ຕູ້, ສະປິງເກີ້ໄລຍະຫ່າງ 02 ຕາແມັດຕໍ່ 01 ຫົວ, ເຄື່ອງດັກຈັບຄວັນ 02 ແມັດຕໍ່ 01 ຫົວ;

3. ຫ້າງຮ້ານ, ທ່າເຮືອ, ສະຖານີຂົນສົ່ງ,ຕ້ອງຕິດຕັ້ງອຸປະກອນບັ້ງມອດໄຟຂະໜາດ 6,8 ກິໂລກຣາມໃນເນື້ອທີ 20 ຕາແມັດ 01 ຕໍ່ບັ້ງ;

4. ສາງເກັບສິນຄ້າ, ຕະຫຼາດ, ຕ້ອງຕິດຕັ້ງບັ້ງມອດໄຟຂະໜາດ 6,8 ກິໂລກຣາມ ຫຼື ຂະໜາດ 12 ກິໂລກຣາມ ໃນເນື້ອທີ່ 20 ຕາແມັດຕໍ່ 01 ບັ້ງ, ຕ້ອງຕິດຕັ້ງລະບົບກ່ອກນ້ຳສຸກເສີນອ້ອມຮອບໄລຍະຫ່າງຂອງການຕິດຕັ້ງແມ່ນ 60 ຕາແມັດ ຕໍ່ 01 ຫົວ;

5. ປ້ຳນ້ຳມັນ ຕ້ອງຕິດຕັ້ງບັ້ງມອດໄຟ ຂະໜາດ 12 ກິໂລກຣາມ ຈຳນວນ 01 ບັ້ງຕໍ່ 01 ຕູ້ຈ່າຍນ້ຳມັນ ແລະ ຕ້ອງມີຖົງຊາຍ ແລະ ຊວ້ານຢາງ;

6. ສາງນ້ຳມັນ ຕ້ອງຕິດຕັ້ງບັ້ງມອດໄຟຂະໜາດ 6,8 ກິໂລກຣາມ, 12ກິໂລກຣາມ, 35 ກິໂລກຣາມ ຕ້ອງຕິດຕັ້ງອຸປະກອນກັນຟ້າຜ່າ, ກ່ອກນ້ຳມອດໄຟສຸກເສີນ, ເຄມີໂຟມ ອ້ອມຮອບສາງ;

7. ເທດສະບານແຂວງ, ເມືອງ, ນະຄອນ ຕ້ອງຕິດຕັ້ງກ໋ອກນ້ຳ 01 ຕາລາງກິໂລແມັດຕໍ່ 02 ກ໋ອກ;

8. ອຸປະກອນມອດໄຟທີ່ຈະນຳມາຕິດຕັ້ງ ຕ້ອງໄດ້ມາດຕະຖານ, ກໍລະນີເຈົ້າຂອງກິດຈະການເປັນຜູ້ນຳອຸປະກອນມາເອງ ຕ້ອງເອົາມາຈາກເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຫຼື ເອົາມາຈາກບໍລິສັດ, ຮ້ານຄ້າທີ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງຂອງລັດໃນການອະນຸຍາດໃຫ້ຈຳໜ່າຍອຸປະກອນດັ່ງກ່າວ.

**ມາດຕາ 11 ມາດຖານຕິດຕັ້ງອຸປະກອນມອດໄຟ ໃສ່ຍານພາຫະນະ**

ມາດຖານການຕິດຕັ້ງອຸປະກອນມອດໄຟໃສ່ຍານພາຫະນະ ມີດັ່ງນີ້:

1. ລົດເບົາ ນ້ຳໜັກບໍ່ເກີນ 3,500 ກິໂລກຣາມ, ຕ້ອງຕິດຕັ້ງບັ້ງມອດໄຟຂະໜາດ 02 ກິໂລກຣາມ ຈຳນວນ 01ບັ້ງຕໍ່ລົດ 01 ຄັນ;

2. ລົດບັນທຸກ ນ້ຳໜັກເກີນ 3,500 ກິໂລກຣາມຂຶ້ນໄປ ຕ້ອງຕິດຕັ້ງບັ້ງມອດໄຟຂະໜາດ 6,8 ກິໂລກຣາມຈຳນວນ 01 ບັ້ງ ຕໍ່ລົດ 01 ຄັນ, ສະເພາະລົດພ່ວງຕ້ອງຕິດຕັ້ງ 02 ບັ້ງ;

3. ການຕິດຕັ້ງບັ້ງມອດໄຟ ຕ້ອງຕິດຕັ້ງໄວ້ຕາມຈຸດທີ່ໂຮງງານພະລິດລົດກຳນົດສະເພາະ, ຖ້າຫາກລົດຄັນໃດ ຫາກບໍ່ມີບ່ອນເກັບມ້ຽນສະເພາະຈາກໂຮງງານ ແມ່ນໃຫ້ຕິດຕັ້ງໄວ້ກ້ອງເບາະລົດ, ຫຼັງເບາະລົດ.

**ມາດຕາ 12 ມາດຖານເກັບມ້ຽນຖັງແກັສ**

ສະຖານທີ່ ຫຼື ຮ້ານຈຳໜ່າຍອາຍແກັດຕັ້ງຢູ່ໃນເຂດຊຸມຊົນທີ່ມີຜູ້ຄົນອາໄສຢູ່ຈຳນວນຫຼາຍ, ໃກ້ສຳນັກງານອົງການ, ໃກ້ຕະຫຼາດ, ໃກ້ໂຮງຮຽນ, ໃກ້ໂຮງຈັກໂຮງງານ ການເກັບມ້ຽນຖັງແກັດຕ້ອງຢູ່ໃນເນື້ອທີ່ 25 ຕາແມັດ ຕໍ່ 20 ຖັງ ແລະ ໄດ້ຜ່ານການກວດກາຂອງເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຈາກນັ້ນຕ້ອງໄດ້ປະກອບເອກະສານຍື່ນຕໍ່ພາກສ່ວນກ່ຽວຂ້ອງເພື່ອອະນຸຍາດດຳເນີນກິດຈະການ.

## ໝວດທີ 3
## ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 13 ພາລະບົດບາດຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີພາລະບົດບາດດັ່ງນີ້:

1. ເປັນເຈົ້າການໃນການຈັດຕັ້ງປະຕິບັດວາງແຜນ, ຄຸ້ມຄອງ, ກວດກາ, ປັບປຸງ, ກໍ່ສ້າງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ມີຄວາມເຂັ້ມແຂງທາງດ້ານວຽກງານວິຊາສະເພາະ, ດຳເນີນຄະດີຕໍ່ບຸກຄົນ, ນິຕິບຸກຄົນ;

2. ຄົ້ນຄ້ວາສ້າງນິຕິກຳລຸ່ມກົດໝາຍ, ແຜນການ, ມາດຕະການສະກັດກັ້ນ ແລະ ຕ້ານອັກຄີໄພເພື່ອນຳສະເໜີຂຶ້ນເທິງປະກາດໃຊ້;

3. ບຳລຸງ, ກໍ່ສ້າງ, ຍົກລະດັບທາງດ້ານກຳລັງວິຊາສະເພາະໃຫ້ແກ່ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຂອງສຳນັກງານອົງການ ແລະ ຂອງບ້ານ;

4. ກວດກາຊັນນະສູດສະຖານທີ່ເກີດອັກຄີໄພ ແລະ ທັງດຳເນີນຄະດີຕໍ່ຜູ້ກະທຳຜິດຕາມກົດໝາຍ.

5. ອອກໃບຢັ້ງຢືນການກວດຜ່ານ ແຜນປ້ອງກັນສະກັດກັ້ນອັກຄີໄພ, ໃນການປຸກສ້າງ, ຕໍ່ເຕີມປ່ຽນລັກສະນະການນຳໃຊ້ກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ ເພື່ອໃຫ້ກອງບັນຊາການ ປກສ ແຂວງອອກໃບອະນຸຍາດ;

6. ກວດກາເຕັກນິກຄວາມປອດໄພ ທາງດ້ານອັກຄີໄພ, ລະບົບສະກັດກັ້ນຕ້ານອັກຄີໄພ ແລະ ຕິດຕັ້ງອຸປະກອນມອດໄຟ;

7. ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, ຝຶກອົບຮົມເຕັກນິກການນຳໃຊ້ ອຸປະກອນກັ້ນ ແລະ ມອດໄຟ, ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ;

8. ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ສາມາດດຳເນີນຄະດີຕໍ່ບຸກຄົນ ຫຼື ນິຕິບຸກຄົນ ຫາກໄດ້ເຮັດໃຫ້ໄຟໄໝ້ເຮືອນ, ຕຶກ, ອາຄານ, ສາງເຄື່ອງ, ຫ້າງຮ້ານ, ພືນລະປູກ ຫຼື ຊັບສິນອື່ນທີ່ຖືກເສຍຫາຍຍ້ອນຄວາມປະໝາດ, ຈູດ, ເຜົາ;

9. ຕຳຫຼວດສະກັດກັ້ນ ແລະ ຕ້ານອັກໄພ ມີສິດຈຳໜ່າຍອຸປະກອນມອດໄຟທຸກຊະນິດໃຫ້ແກ່ສັງຄົມ, ຕາມການສະໜອງຂອງກະຊວງ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ສິດ, ໜ້າທີ ດັ່ງນີ້:

1. ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີສິດນຳກຳລັງ, ພາຫະນະ ອອກປະຕິບັດໜ້າທີ່ຕ້ານອັກຄີໄພ ຜ່ານທຸກເສັ້ນທາງ, ຜ່ານໄຟອຳນາດ, ໃຊ້ໄຟຕາ, ໄຟຂໍທາງ, ໄຟສຸກເສີນ, ໂທລະໂຄ່ງ, ເປີດຫວໍ ແລະ ສັນຍານອື່ນໆ ຜ່ານຂົວ, ຜ່ານທາງ, ຂ້າມເຮືອບັກ ແມ່ນບໍ່ໄດ້ເສຍຄ່າ;

2. ເວລາເດີນທາງໄປປະຕິບັດໜ້າທີ່ຕ້ານອັກຄີໄພ, ກໍລະນີລົດມອດໄຟ ເກີດອຸປະຕິເຫດຢູ່ບົນທ້ອງຖະໜົນ, ໂຊເຟີລົດ ຫຼື ກຳລັງວິຊາສະເພາະສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນຊາບ, ແຕ່ລົດ ແລະ ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງສືບຕໍ່ໄປເຮັດໜ້າທີ່;

3. ເວລາປະຕິບັດໜ້າທີ່ຕ້ານອັກຄີໄພ ຖ້າຫາກນ້ຳມັນລົດມອດໄຟບໍ່ພຽງພໍໃນການເຮັດໜ້າທີ່ ສາມາດນຳໃຊ້ນ້ຳມັນໄດ້ທຸກປ້ຳທີ່ຢູ່ໃກ້ສຸດ, ພາຍຫຼັງສຳເລັດການເຮັດໜ້າທີ່ແລ້ວຈຶ່ງທົດແທນຄ່ານ້ຳມັນຄືນໃຫ້ເຈົ້າຂອງປ້ຳນ້ຳມັນ;

4. ເວລາເກີດອັກຄີໄພ ເຈົ້າໜ້າທີ່ ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີສິດນຳໃຊ້ພາຫະນະບັນ ທຸກນ້ຳ, ລະດົມພາຫະນະອື່ນໆ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າເຮັດໜ້າທີ່ຕ້ານອັກຄີໄພ, ພາຫະນະທີ່ຖືກລະດົມເຮັດໜ້າທີ່ຕ້ານອັກຄີໄພ ມີສິດໃຊ້ແກ່ລົດ, ເປີດໄຟຂໍທາງ, ເປີດໄຟຕາໄຟສຸກເສີນ ແລະ ສັນຍານເຕືອນອື່ນໆ;

5. ກໍລະນີ ເກີດອັກຄີໄພຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພສາມາດນຳໃຊ້ບັ້ງມອດໄຟ ອຸປະກອນມອດໄຟທຸກຊະນິດ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ຢູ່ໃກ້ ກັບສະຖານທີ່ເກີດເຫດໄຟໄໝ້;

6. ເວລາເກີດອັກຄີໄພຮ້າຍແຮງ, ລົດມອດໄຟບໍ່ສາມາດເຂົ້າໄປໄດ້ ຫຼື ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພເຂົ້າໄປບໍ່ໄດ້ ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ສາມາດມ້າງສິ່ງກີດຂວາງຕ່າງໆເພື່ອເຂົ້າຊ່ວຍເຫຼືອກອບກູ້ເອົາຊີວິດ, ຊັບສິນຂອງພົນລະເມືອງ, ສະກັດກັ້ນບໍ່ໃຫ້ໄຟໄໝ້ແຜ່ລາມ ແລະ ຂຶ້ນແຜນສະເໜີຄະນະກຳມະການເພື່ອນຳໃຊ້ກອງທຶນ, ງົບປະມານຂອງລັດ ທົດແທນຄືນຕາມຄວາມເໝາະສົມ;

7. ມີສິດສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ບັນດາກິດຈະການຕ່າງໆ ທີ່ບໍ່ມີຄວາມຮັບປະກັນຕໍ່ຄວາມປອດໄພທາງດ້ານອັກຄີໄພ ເຊິ່ງຈະສ້າງຄວາມເສຍຫາຍຢ່າງໜັກໜ່ວງຕໍ່ຊີວິດ, ຊັບສິນຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ;

8. ມີສິດກວດກາການນຳເຂົ້າ, ຜະລິດ, ຈຳໜ່າຍ, ການຕິດຕັ້ງອຸປະກອນກັນ ແລະ ມອດໄຟ ອອກໃບກວດຜ່ານ ຫຼື ບໍ່ອອກໃບກວດຜ່ານ ໃຫ້ແກ່ບັນດາກິດຈະການຕ່າງໆ ທີ່ປຸກສ້າງອາຄານ, ຕໍ່ເຕີມອາຄານ ວັດຖຸໄວໄຟ, ສານເຄມີ, ວັດຖຸລະເບີດ ທີ່ບໍ່ໄດ້ມາດຖານເຕັກນິກ, ປ່ຽນແປງລັກຊະນະນຳໃຊ້ ກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ.

**ມາດຕາ 15 ການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

1. ມີສ່ວນຮ່ວມຕິດຕາມ, ແຈ້ງເຫດ ເມື່ອພົບເຫັນເຫດການເກີດອັກຄີໄພເກີດຂຶ້ນ;

2. ເວລາເກີດອັກຄີໄພ, ຕ້ອງປະກອບສ່ວນສະໜອງອຸປະກອນ, ແຫຼ່ງນ້ຳ, ພາຫະນະ, ກຳລັງຄົນເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ເຂົ້າຮ່ວມການຝຶກອົບຮົມ, ຝຶກຊ້ອມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພຂັ້ນຕົ້ນ;

4. ກຽມພ້ອມຕິດຕັ້ງອຸປະກອນບັ້ງມອດໄຟປະຈຳຢູ່ເຮືອນ, ສຳນັກງານ, ຫົວໜ່ວຍທຸລະກິດ ແລະ ພາຫະນະຂອງຕົນ.

**ມາດຕາ 16 ສິດ, ໜ້າທີ່ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ກໍລະນີເກີດອັກຄີໄພຢູ່ໃນຂົງເຂດເຄຫາສະຖານ, ບ້ານ ຫຼື ບໍລິເວນໃກ້ຄຽງ ຜູ້ບັນຊາກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ສາມາດນຳໃຊ້ກຳລັງ, ພາຫະນະ, ແຫຼ່ງນ້ຳ, ອຸປະກອນປ້ອງກັນ ແລະ ມອດໄຟຂອງຕົນເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 17 ການປ້ອງກັນອັກຄີໄພ ອາຄານເກົ່າ ແລະ ເຮືອນຢູ່ອາໄສໃນເຂດຊຸມຊົນ**

ອາຄານເກົ່າ ແມ່ນອາຄານທີ່ເຄີຍຖືກນຳໃຊ້ ຫຼື ບໍ່ໄດ້ໃຊ້ງານເປັນເວລາຫຼາຍປີ ເຮັດໃຫ້ລະບົບປ້ອງກັນອັກຄີໄພອາດຊຳລຸດ ຫຼື ເກົ່າໄປຕາມເວລາ ສະນັ້ນບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດຢູ່ໃນແຂວງ ສະຫວັນນະເຂດ, ນຳໃຊ້ອາຄານເກົ່າທີ່ມີຄວາມສ່ຽງຕໍ່ການເກີດອັກຄີໄພ ຕ້ອງໄດ້ຜ່ານການກວດກາລະບົບໄຟຟ້າຄືນໃໝ່ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່, ຕ້ອງໄດ້ຜ່ານການກວດກາລະບົບປ້ອງກັນອັກຄີໄພ ຂອງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອອອກໃບຢັ້ງຢືນກວດຜ່ານສຳລັບຄວາມປອດໄພຂອງອາຄານ, ກ່ອນຈະນຳໃຊ້ອາຄານ ຕ້ອງໄດ້ຜ່ານການຢັ້ງຢືນຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;

ສຳລັບເຂດຊຸມຊົນ, ຕຶກອາຄານ ທີ່ຖືກນຳໃຊ້ມາຫຼາຍປີ ທີ່ມີຄວາມສ່ຽງຕໍ່ການເກີດອັກຄີໄພ ແລະ ຍັງບໍ່ທັນມີລະບົບປ້ອງກັນອັກຄີໄພ ຫຼື ມີແລ້ວ ຕ້ອງໄດ້ຮັບການປັບປຸງກວດກາຄືນໃໝ່ ຫຼື ຕິດຕັ້ງລະບົບປ້ອງກັນອັກຄີໄພ ຈາກເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ຕ້ອງໄດ້ກວດກາປັບປຸງລະບົບໄຟຟ້າຄືນໃໝ່, ຕ້ອງມີກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຂອງຊຸມຊົນ, ມີອຸປະກອນມອດໄຟ, ມີແຫຼ່ງນ້ຳ, ມີກ໋ອກນ້ຳແຮງດັນສູງ ແລະ ກຳນົດທາງເສັ້ນທາງເຂົ້າ-ອອກຂອງພາຫະນະເຊັ່ນ: ລົດມອດໄຟຕ້ອງເຂົ້າອອກໄດ້.

**ມາດຕາ 18 ການປ້ອງກັນອັກຄີໄພ ສ້າງອາຄານ**

ບຸກຄົນ, ນິຕິບຸກຄົນ, ອົງການ-ຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ອາໄສຢູ່ ແຂວງ ສະຫວັນນະເຂດ, ກ່ອນຈະດຳເນີນການກໍ່ສ້າງຕຶກ, ອາຄານ, ສະຖານທີ່ຕັ້ງຂອງຕຶກ, ອາຄານ ຕ້ອງມີເສັ້ນທາງ ສາມາດຮອງຮັບລົດມອດໄຟເຂົ້າ-ອອກໄດ້ ຂະໜາດກ້ວາງ ຫ້າ ແມັດຂຶ້ນໄປ, ມີແຜນຜັງອອກແບບລະບົບປ້ອງກັນອັກຄີໄພໄປຜ່ານ ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອກວດກາຢັ້ງຢືນຄວາມຖືກຕ້ອງ, ກ່ອນຈະເປີດນຳໃຊ້ອາຄານ ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພສຳເລັດກ່ອນ.

**ມາດຕາ 19 ການປ້ອງກັນອັກຄີໄພ ໃນການດັດແປງ, ຕໍ່ເຕີມອາຄານ**

ບຸກຄົນ, ນິຕິບຸກຄົນ, ອົງການ-ຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ອາໄສຢູ່ ແຂວງ ສະຫວັນນະເຂດ ກ່ອນຈະດັດແປງອາຄານ - ຕໍ່ເຕີມອາຄານ, ຕ້ອງມີແຜນຜັງອອກແບບລະບົບປ້ອງກັນອັກຄີໄພເພີ່ມເຕີມໂດຍໄດ້ຮັບການຢັ້ງຢືນຈາກຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອຮັບປະກັນຄວາມປອດໄພຕາມລະບົບປ້ອງກັນສະກັດກັ້ນອັກຄີໄພ.

**ມາດຕາ 20 ການປ້ອງກັນອັກຄີໄພໃນສະຖານທີ່ຜະລິດ-ຈຳໜ່າຍວັດຖຸໄວໄຟ**

ບຸກຄົນ,ນິຕິບຸກຄົນ ຫຼື ອົງການ-ຈັດຕັ້ງ ກ່ອນຈະສ້າງຕັ້ງສະຖານທີ່ການຜະລິດວັດຖຸໄວໄຟ ສະຖານທີ່ການຜະລິດຕ້ອງຢູ່ຫ່າງຈາກຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ກອງບັນຊາການ-ກອງພົນ-ກອງພັນ ທະຫານ ແລະ ກອງບັນຊາການ ຕຳຫຼວດ ແຂວງ, ເມືອງ, ນະຄອນ 1.000 ແມັດຂຶ້ນໄປ, ມີລະບົບປ້ອງກັນອັກຄີໄພ, ມີອຸປະກອນມອດໄຟຄົບຖ້ວນ, ຜ່ານການກວດກາຕາມມາດຖານເຕັກນິກຂອງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ອອກໃບຢັ້ງຢືນກວດຜ່ານ;

ສະຖານທີ່ຈຳໜ່າຍອາຍແກັດ ຕ້ອງຮັບປະກັນຄວາມປອດໄພທາງດ້ານອັກຄີໄພ, ມີອຸປະກອນມອດໄຟ, ການເກັບມ້ຽນຖັງແກັດ ຕ້ອງຖືກຕາມມາດຖານເຕັກນິກການກຳນົດ, ກວດກາຈາກ ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 21 ການປ້ອງກັນອັກຄີໄພໃນພາຫະນະ**

ບຸກຄົນ, ນິຕິບຸກຄົນທີ່ດຳເນີນທຸລະກິດ ນຳເຂົ້າ, ສົ່ງອອກ, ຜະລິດ, ຈຳໜ່າຍ, ຄຸ້ມຄອງ, ນຳໃຊ້ພາຫະນະ ປະເພດລົດເບົານ້ຳໜັກບໍ່ເກີນ 3.500 ກິໂລກຣາມ ແລະ ລົດບັນທຸກນ້ຳໜັກເກີນ 3.500 ກິໂລກຣາມຂຶ້ນໄປ, ຕ້ອງຕິດຕັ້ງບັ້ງມອດໄຟໃຫ້ຄົບຖ້ວນ ແລະ ມີອຸປະກອນຍຶດບັ້ງມອດໄຟໄວ້ ເພື່ອຮັບປະກັນ

ການເໜັງຕີງຂອງບັ້ງມອດໄຟ, ຫຼືກລ້ຽງເກີດອຸປະຕິເຫດຈາກບັ້ງມອດໄພ ແລະ ຕ້ອງຕິດຕັ້ງຕາມມາດຕະຖານທີ່ໄດ້ກຳນົດໄວ້ຕາມມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22 ການນຳໃຊ້ແຫຼ່ງນ້ຳ**

ແຫຼ່ງນ້ຳເປັນປັດໃຈສຳຄັນທີ່ມີຄວາມຕ້ອງການສູງ ແລະ ເວລາເກີດອັກຄີໄພ ຍັງພົບຄວາມຫຍຸ້ງຍາກໃນການ ຊອກຫາແຫຼ່ງນ້ຳເພື່ອນຳໃຊ້ເຂົ້າວຽກງານຕ້ານອັກຄີໄພ, ກໍລະນີເກີດເຫດໄຟໄໝ້, ໜອງນ້ຳ ສະຖານີນ້ຳປະປາ, ນ້ຳປະປາ, ອ່າງເກັບນ້ຳ, ສະລອຍນ້ຳ, ຂອງບຸກຄົນ, ນິຕິບຸກຄົນ, ອົງການ-ຈັດຕັ້ງ ຕ້ອງໄດ້ປະກອບສ່ວນ ຫຼື ນຳໃຊ້ເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພເປັນກໍລະນີພິເສດ.

**ມາດຕາ 23 ການນຳໃຊ້ພາຫະນະ**

ລົດບັນທຸກນ້ຳ, ລົດສະແຕັກນ້ຳ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ຂອງອົງການຈັດຕັ້ງທີ່ຢູ່ໃກ້ກັບສະຖານທີ່ເກີດເຫດໄຟໄໝ້ ຕ້ອງໄດ້ປະກອບສ່ວນ ຫຼື ຈະຖືກນຳໃຊ້ເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພເປັນກໍລະນີພິເສດ, ສຳລັບລົດເກັງ, ລົດກະບະ, ລົດຈິບ, ລົດຕູ້, ລົດບັນທຸກຕ້ອງໄດ້ປະກອບສ່ວນເຂົ້າຊ່ວຍເຫຼືອຂົນສິ່ງຊັບສິນຂອງຜູ້ປະສົບເຫດໄຟໄໝ້ ຫຼື ຊັບສິນອື່ນໆ ແລະ ຊັບສິນຂອງເຮືອນທີ່ຢູ່ໃກ້ຄຽງກັບເຮືອນທີ່ເກີດໄຟໄໝ້ໄປໄວ້ບ່ອນທີ່ມີຄວາມປອດໄພຕາມການກຳນົດຂອງເຈົ້າໜ້າທີ່

**ມາດຕາ 24 ການນຳໃຊ້ອຸປະກອນ**

ບັ້ງມອດໄຟ, ອຸປະກອນມອດໄຟທຸກຊະນິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ຢູ່ໃກ້ກັບສະຖານທີ່ເກີດເຫດໄຟໄໝ້ ຕ້ອງໄດ້ປະກອບສ່ວນ ຫຼື ຈະຖືກນຳໃຊ້ເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພເປັນກໍລະນີພິເສດ.

**ມາດຕາ 25 ການສ້າງຕັ້ງ ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງ ປກຊ-ປກສ, ຊາວໜຸ່ມບ້ານ ທີ່ໄດ້ຮັບການຄັດເລືອກແຕ່ງຕັ້ງ ຈາກອຳນາດການປົກຄອງບ້ານ ກຳລັງຂອງສຳນັກງານ, ອົງການ ແມ່ນຜູ້ບໍລິຫານ ຫຼື ຫົວໜ້າສຳນັກງານ, ອົງການ ເປັນຜູ້ຄັດເລືອກແຕ່ງຕັ້ງ ແລະ ຕ້ອງໄດ້ເຂົ້າຮ່ວມຝຶກອົບຮົມຄວາມຮູ້ພື້ນຖານວຽກງານສະກັດກັ້ນ-ຕ້ານອັກຄີໄພ ພາຍໃຕ້ການຊີ້ນຳຂອງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ພາຍຫຼັງໄດ້ຝຶກອົບຮົມແລ້ວ ບ້ານຕ້ອງໄດ້ສ້າງແຜນການນຳໄປເຜີຍແຜ່ ໃຫ້ແຕ່ລະຄອບຄົວໄປຈັດຕັ້ງປະຕິບັດ ແລະ ສຳນັກງານອົງການ ຕ້ອງໄດ້ໄປເຜີຍແຜ່ໃຫ້ພະນັກງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ.

## ໝວດທີ 4
## ກອງທຶນ

**ມາດຕາ 26 ການສ້າງຕັ້ງກອງທຶນ**

- **ຂັ້ນແຂວງ.** ອົງການປົກຄອງແຂວງ, ກອງບັນຊາການ ປກສ ແຂວງ ເປັນຜູ້ສ້າງຕັ້ງກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອຮັບປະກັນໃນການພັດທະນາ ທາງດ້ານກຳລັງ, ພາຫະນະ, ອຸປະກອນໃນການສະກັດກັ້ນ ແລະ ຕ້ານອັກຄີໄພ.
- **ຂັ້ນເມືອງ, ນະຄອນ.** ອົງການປົກຄອງຂັ້ນເມືອງ,ນະຄອນ, ກອງບັນຊາການ ປກສ ເມືອງ ປກສນະຄອນ ເປັນຜູ້ສ້າງຕັ້ງກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອຮັບປະກັນໃນການພັດທະນາທາງດ້ານກຳລັງ, ພາຫະນະ, ອຸປະກອນ ໃນການສະກັດກັ້ນແລະ ຕ້ານອັກຄີໄພ.

**ມາດຕາ 27 ແຫຼ່ງທີ່ມາຂອງກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ມາຈາກງົບປະມານຂອງລັດ, ການປະກັນໄພທາງດ້ານອັກຄີໄພ, ການຈຳໜ່າຍອຸປະກອນມອດໄຟ, ການເຄື່ອນໄຫວສ້າງກິດຈະກຳທາງດ້ານສັງຄົມ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 28 ການຄຸ້ມຄອງກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງຖືກຮັກສາໄວ້ ຄັງເງິນ ຂອງກອງບັນຊາການ ປກສ

ແຂວງ ປກສ ເມືອງ, ປກສ ນະຄອນ.

**ມາດຕາ 29 ການນຳໃຊ້ກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ຈະຖືກນຳໃຊ້ເຂົ້າໃນ ການພັດທະນາຍົກລະດັບຄວາມຮູ້ ຄວາມສາມາດໃຫ້ແກ່ກຳລັງ, ຝຶກແອບ, ຝຶກຊ້ອມ, ການໃຫ້ຄວາມຮູ້ພື້ນຖານ, ການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳ, ການປະຕິບັດນະໂຍບາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພໃຫ້ສັງຄົມ;

ນຳໃຊ້ກອງທຶນເຂົ້າໃນການບຳລຸງຮັກສາພາຫະນະ, ອຸປະກອນມອດໄຟ, ບຳລຸງຮັກສາເຂົ້າດ້ານວິຊາສະເພາະໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ, ເປັນຄັງແຮສຸກເສີນວິຊາສະເພາະດ້ານອັກຄີໄພ.

## ໝວດທີ 5
## ສິດ,ໜ້າທີ່ ອົງການຄຸ້ມຄອງ ແລະ ກວດກາ ການສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 30 ອົງການຄຸ້ມຄອງ**

ຄະນະກຳມະການຄຸ້ມຄອງ ການສະກັດກັ້ນ ແລະ ຕ້ານອັກຄີໄພ ປະກອບມີຄື:

- ຫ້ອງວ່າການແຂວງ, ເມືອງ, ນະຄອນ;
- ກອງບັນຊາການ ປກສ ແຂວງ, ປກສ ເມືອງ, ນະຄອນ;
- ພະແນກຍຸຕິທຳ, ຫ້ອງການຍຸຕິທຳ ເມືອງ, ນະຄອນ;
- ພະແນກອຸດສາຫະກຳ ແລະ ການຄ້າ;
- ພະແນກໂຍທາທິການ-ຂົນສົ່ງ, ຫ້ອງການໂຍທາທິການ-ຂົນສົ່ງ ເມືອງ, ນະຄອນ;
- ພະແນກພະລັງງານ ແລະ ບໍ່ແຮ່, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ນະຄອນ;
- ຫ້ອງການຄຸ້ມຄອງພັດທະນາ ແລະ ບໍລິການ ເມືອງ, ນະຄອນ;
- ການຈັດຕັ້ງບ້ານ.

**ມາດຕາ 31 ສິດໜ້າທີ່ອົງການຄຸ້ມຄອງ**

ອົງການຄຸ້ມ ມີສິດໜ້າທີ່ດັ່ງນີ້:

1. ມີສິດຄົ້ນຄ້ວາກວດການຳສະເໜີ, ປັບໃໝການດຳເນີນທຸລະກິດທີ່ລະເມີດຕິດພັນກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

2. ມີສິດລະດົມທຶນນຳອົງການຈັດຕັ້ງຂອງລັດ, ເອກະຊົນ, ນັກທຸລະກິດ, ບໍລິສັດຫ້າງຮ້ານເພື່ອຮັບໃຊ້ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ;

3. ອົງການປົກຄອງບ້ານ, ມີໜ້າທີ່ປຸກລະດົມ ຂົນຂວາຍນຳພາປະຊາຊົນ ມີສ່ວນຮ່ວມເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 32 ຫ້ອງວ່າການປົກຄອງແຂວງ, ເມືອງ, ນະຄອນ**

ຫ້ອງວ່າການປົກຄອງແຂວງ, ເມືອງ, ນະຄອນ ມີສິດໜ້າທີ່ດັ່ງນີ້:

1. ປະກາດນຳໃຊ້ນິຕິກຳລຸ່ມກົດໝາຍ, ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້.

2. ຄຸ້ມຄອງ, ຕິດຕາມກວດກາ ການສະກັດກັ້ນ ແລະ ຕ້ານອັກຄີໄພທົ່ວແຂວງ, ແຕ່ງຕັ້ງຄະນະກຳມະການຂັ້ນແຂວງ;

3. ມີສິດກວດກາ ຜູ້ປະກອບການ ຫາກເຫັນວ່າ ມີການລະເມີດ ຕ້ອງໄດ້ປະຕິບັດມາດຕະການຕາມແຕ່ລະກໍລະນີ;

4. ປະຕິບັດສິດ, ໜ້າທີ່ອື່ນ ທີ່ພົວພັນກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມກົດໝາຍ ແລະ ນິຕິກຳອື່ນ.

**ມາດຕາ 33 ກອງບັນຊາການ ປກສ ແຂວງ**

ກອງບັນຊາການ ປກສ ແຂວງ ມີສິດໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາວາງແຜນການສະກັດກັ້ນ ແລະ ຕ້ານອັກຄີໄພໃນຂອບເຂດທົ່ວແຂວງ ສະຫວັນນະເຂດ;

2. ຄຸ້ມຄອງ, ກວດກາ, ປັບປຸງ, ຝຶກແອບກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ໂຄສະນາ, ແນະນໍາແຜນກໍານົດສະກັດກັ້ນ ແລະ ຕ້ານອັກຄີໄພ, ກວດຜ່ານ, ອອກໃບອະນຸຍາດແຜນຜັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການປຸກສ້າງ, ຕໍ່ເຕີມ ຫຼື ປ່ຽນແປງຮູບແບບນໍາໃຊ້ອາຄານ;

4. ປະຕິບັດສິດ, ໜ້າທີ່ອື່ນ ທີ່ພົວພັນກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມກົດໝາຍນິຕິກໍາອື່ນ;

5. ສ້າງແຜນ, ຄຸ້ມຄອງງົບປະມານ, ພາຫະນະ, ອຸປະກອນຮັບໃຊ້;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ.

**ມາດຕາ 34 ກອງບັນຊາການ ປກສ ເມືອງ, ນະຄອນ**

ກອງບັນຊາການ ປກສ ເມືອງ, ນະຄອນ ມີສິດໜ້າທີ່ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນການຂອງກອງບັນຊາການ ປກສ ແຂວງ;

2. ໂຄສະນາເຜີຍແຜ່ແຜນການ, ຊີ້ນໍາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຂອງກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສໍານັກງານ, ອົງການ ແລະ ຂອງບ້ານ;

3. ປຸກລະດົມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທີ່ຢູ່ໃນຂອບເຂດ ເມືອງຂອງຕົນເຂົ້າຮ່ວມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ກວດຜ່ານ, ອອກໃບອະນຸຍາດແຜ່ນຜັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການປຸກສ້າງ, ຕໍ່ເຕີມ ຫຼື ປ່ຽນແປງຮູບແບບນໍາໃຊ້ ພາຍໃນເຂດຄວາມຮັບຜິດຊອບຂອງ ປກສ ເມືອງ, ປກສ ນະຄອນ, ໃນກໍລະນີການປຸກສ້າງຕຶກອາຄານລະດັບ 03 ຊັ້ນຂຶ້ນໄປ ຕ້ອງໄດ້ປະສານມາຍັງ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເພື່ອສົມທົບກວດກາຮ່ວມ;

5. ຂຶ້ນແຜນນໍາສະເໜີຂັ້ນເທິງ ຝຶກແອບກໍາລັງ ສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 35 ພະແນກຍຸຕິທໍາ, ເມືອງ, ນະຄອນ**

ພະແນກຍຸຕິທໍາ, ຫ້ອງການຍຸຕິທໍາເມືອງ, ນະຄອນ ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ສະພາປະຊາຊົນແຂວງ, ອົງການປົກຄອງເມືອງ, ສະມາຊິກສະພາເຂດເລືອກຕັ້ງຂັ້ນເມືອງ, ນະຄອນ ໃນການຊຸກຍູ້ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດນິຕິກໍາ, ພ້ອມທັງຈັດພິມໂຄສະນາເຜີຍແຜ່ໃຫ້ທົ່ວເຖິງຮາກຖານປະຊາຊົນຢ່າງກວ້າງຂວາງ.

**ມາດຕາ 36 ພະແນກອຸດສາຫະກໍາ ແລະ ການຄ້າ, ເມືອງ,ນະຄອນ**

ພະແນກອຸດສາຫະກໍາການຄ້າ ມີໜ້າທີ່ກວດກາການນໍາເຂົ້າ-ສົ່ງອອກ ວັດຖຸໄວໄຟ, ທາດໄໝ້ລະເບີດ ອຸປະກອນມອດໄຟ, ກວດກາອະນຸຍາດ ຫຼື ບໍ່ອະນຸຍາດ ປະກອບກິດຈະການຈໍາໜ່າຍ ອຸປະກອນມອດໄຟ ການຜະລິດຈໍາໜ່າຍອາຍແກັດ, ວັດຖຸໄວໄຟ, ທາດໄໝ້ລະເບີດ;

ຫ້ອງການອຸດສາຫະກໍາການຄ້າເມືອງ, ນະຄອນ ມີໜ້າທີ່ເປັນເສນາທິການໃຫ້ແກ່ພະແນກອຸດສາຫະກໍາ ແລະ ການຄ້າ, ມີສິດຕິດຕາມກວດກາການຈໍາໜ່າຍ ວັດຖຸໄວໄຟ, ທາດໄໝ້ລະເບີດ, ອຸປະກອນມອດໄຟ ກວດກາອະນຸຍາດ ຫຼື ບໍ່ອະນຸຍາດ ປະກອບກິດຈະການຈໍາໜ່າຍ ອຸປະກອນມອດໄຟ, ການຜະລິດຈໍາໜ່າຍອາຍແກັດ, ວັດຖຸໄວໄຟ, ທາດໄໝ້ລະເບີດ ຕາມຫຼັກການວິຊາສະເພາະ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 37 ພະແນກໂຍທາທິການ ແລະ ຂົນສົ່ງ, ເມືອງ, ນະຄອນ**

ພະແນກໂຍທາທິການ-ຂົນສົ່ງ ມີໜ້າທີ່ຄຸ້ມຄອງກວດກາ ແລະ ອະນຸຍາດດໍາເນີນການປຸກສ້າງ, ຕໍ່ເຕີມ, ປ່ຽນແປງລັກຊະນະຂອງອາຄານ, ຕິດຕາມ, ກວດກາການ, ອະນຸຍາດ ເຄື່ອນຍ້າຍວັດຖຸໄວໄຟ, ທາດໄໝ້ລະເບີດ, ທາດແຕກ, ອາຍແກັດ ແລະ ອື່ນໆ;

ຫ້ອງການໂຍທາທິການ-ຂົນສົ່ງເມືອງ, ນະຄອນ ມີໜ້າທີ່ເປັນເສນາທິການ, ເປັນເຈົ້າການໃຫ້ແກ່ພະແນກໂຍທາທິການ ແລະ ຂົນສົ່ງ, ມີສິດຕິດການກວດກາຄວາມປອດໄພໃນການເຄື່ອນຍ້າຍວັດຖຸໄວໄຟ, ທາດໄໝ້ລະເບີດ, ທາດແຕກ, ອາຍແກັດ ຢູ່ໃນຂອບເຂດພື້ນທີ່ຄວາມຮັບຜິດຊອບ.

**ມາດຕາ 38 ພະແນກພະລັງງານ ແລະ ບໍ່ແຮ່, ເມືອງ, ນະຄອນ**

ພະແນກພະລັງງານ ແລະ ບໍ່ແຮ່ ມີໜ້າທີ່ກວດກາ, ຄຸ້ມຄອງໂຄງສ້າງຕາຂ່າຍໄຟຟ້າທີ່ຜ່ານເຂດຊຸມຊົນ ຜ່ານຕຶກ, ຜ່ານອາຄານ, ຜ່ານທາງອຸໂມງ, ຕັດກະແສໄຟຟ້າໃນເວລາເກີດອັກຄີໄພ ແລະ ຊີ້ນໍາ ຫ້ອງການສູນບໍລິການໄຟຟ້າ ທີ່ປະຈໍາ ເມືອງ, ນະຄອນ ເພື່ອເຄື່ອນໄຫວຕາມຫຼັກການວິຊາສະເພາະຂອງຕົນ;

ຫ້ອງການໄຟຟ້າ ຫຼື ສູນບໍລິການໄຟຟ້າ ປະຈໍາ ເມືອງ, ນະຄອນ ເພື່ອກວດກາລະບົບຄວາມປອດໄພທາງດ້ານໄຟຟ້າ ຜ່ານຕຶກອາຄານ, ຜ່ານທາງອຸໂມງ, ທີ່ຢູ່ອາໄສຂອງຜູ້ປະກອບການ, ຖ້າຫາກພົບເຫັນບັນຫາລະບົບນໍາໄຟຟ້າລໍາລຸດ, ເປ່ເພ ມີຄວາມສ່ຽງໃນການເກີດອັກຄີໄພ ຕ້ອງໄດ້ປະສານສົມທົບກັບເຈົ້າຂອງເຄຫາສະຖານ ເພື່ອແກ້ໄຂປັບປຸງຄືນ, ໃນເວລາເກີດອັກຄີໄພ ຕ້ອງຮີບຮ້ອນຕັດກະແສໄຟຟ້າໃຫ້ທັນກັບເຫດການຕົວຈິງ.

**ມາດຕາ 39 ຫ້ອງການຄຸ້ມຄອງພັດທະນາ ແລະ ບໍລິຫານເມືອງ, ນະຄອນ**

1. ກວດກາຈັດສັນລະບົບໂຄງສ້າງຂອງເຂດຊຸມຊົນ, ໝູ່ບ້ານ, ເຄຫາສະຖານຂອງບຸກຄົນ, ຂອງນິຕິບຸກຄົນທີ່ກໍ່ສ້າງ, ຕໍ່ເຕີມເກີນຂອບເຂດຖະໜົນ, ປ່າທາງ, ພື້ນທີ່ສາທາລະນະ;

2. ສົມທົບກັບພາກສ່ວນກ່ຽວຂ້ອງກວດກາສະຖານທີ່ຊື້ຂາຍສິນຄ້າ (ຕະຫຼາດ) ໃຫ້ຢູ່ບ່ອນທີ່ເໝາະສົມກວ້າງຂວາງ, ຖືກຕ້ອງຕາມນິຕິກໍາອື່ນໆ ທີ່ກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 40 ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຂໍ້ຫ້າມ ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີດັ່ງນີ້:

1. ຫ້າມທຸກການກະທໍາດ້ວຍການປະໝາດ, ເລີນເລີ້, ເຮັດໃຫ້ເກີດໄຟໄໝ້ ສ້າງຜົນເສຍຫາຍຕໍ່ສຸຂະພາບ, ຊີວິດ, ຊັບສິນຂອງລັດ, ລວມໝູ່;

2. ຫ້າມຂັດຂວາງ ການຈະລາຈອນຂອງລົດມອດໄຟ ແລະ ການປະຕິບັດໜ້າທີ່ ຂອງກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ຫ້າມເອົາຊັບສິນຂອງຜູ້ຖືກເຄາະຮ້າຍຈາກອັກຄີໄພ, ຫ້າມແຈ້ງເທັດກ່ຽວກັບໄຟໄໝ້;

4. ຫ້າມຜະລິດ, ດໍາເນີນກິດຈະການເກັບມ້ຽນ, ຂົນສົ່ງ, ຄຸ້ມຄອງ, ນໍາໃຊ້, ຄ້າຂາຍວັດຖຸທີ່ອັນຕະລາຍສ່ຽງຕໍ່ການໄໝ້ລະເບີດ ໂດຍບໍ່ໄດ້ຜ່ານການກວດກາຂອງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ຫ້າມຈໍາໜ່າຍບັ້ງມອດໄຟ, ຫົວກັອກນໍ້າມອດໄຟ ຫຼື ອຸປະກອນມອດໄຟທຸກຊະນິດ ໂດຍບໍ່ໄດ້ຜ່ານການກວດກາຂອງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

6. ຫ້າມດໍາເນີນກິດຈະການ, ຖ່າຍໂອນສິດນໍາໃຊ້ກິດຈະການທີ່ມີຄວາມເປັນອັນຕະລາຍຕໍ່ການໄໝ້ລະເບີດໂດຍບໍ່ໄດ້ຜ່ານການກວດກາຂອງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

7. ຫ້າມທໍາລາຍ, ປ່ຽນແປງ, ເຄື່ອນຍ້າຍ ປ້າຍຊີ້ບອກທາງໜີໄຟສຸກເສີນ, ທາງໜີໄພ, ພາຫະນະວັດຖຸອຸປະກອນສະກັດກັ້ນ ແລະ ຕ້ານອັກຄີໄພ ອື່ນໆ;

8. ຫ້າມສ້າງສິ່ງກີດຂວາງ, ທໍາລາຍ, ປ່ຽນສະພາບກ໊ອກນໍ້າທີ່ໄວ້ສໍາລັບລົດມອດໄຟໄປເຕີມນໍ້າ;

9. ຫ້າມພະນັກງານທີ່ເຮັດໜ້າທີ່ຈໍາໜ່າຍນໍ້າປະປາ ຕັດການຈໍາໜ່າຍນໍ້າປະປາໃນເວລາເກີດອັກຄີໄພ.

**ມາດຕາ 41 ເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ຂໍ້ຫ້າມ ສໍາລັບບຸກ ເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີດັ່ງນີ້:

1. ຫ້າມ ປະລະໜ້າທີ່, ບໍ່ປະຕິບັດຕາມຄໍາສັ່ງ ຜູ້ບັງຄັບ-ບັນຊາ ເວລາປະຕິບັດໜ້າທີ່ຕ້ານອັກຄີໄພ;

2. ຫ້າມ ສວຍໃຊ້ສິດ, ໜ້າທີ່, ຕໍາແໜ່ງ ອອກເຄື່ອນໄຫວກວດກາເຕັກນິກ, ຕິດຕັ້ງວັດຖຸອຸປະກອນ ແລະ ອອກໃບອະນຸຍາດໂດຍບໍ່ຖືກຕ້ອງ;

3. ໃນເວລາປະຕິບັດໜ້າທີ່ ສະກັດກັ້ນ ແລະ ຕ້ານອັກຄີໄພ ຫ້າມຮຽກຮ້ອງຄ່າສິນເປືອງ, ຄ່າຕອບແທນ ຈາກຜູ້ຖືກເຄາະຮ້າຍ ຫຼື ຜູ້ໄດ້ຮັບຜົນກະທົບຈາກອັກຄີໄພ;

4. ຫ້າມເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ນຳລົດມອດໄຟ ທີ່ບັນຈຸນ້ຳໄປບໍລິການ ຫຼື ຈຳໜ່າຍ;

5. ຫ້າມເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ນຳໃຊ້ວັດຖຸອຸປະກອນ, ແຫຼ່ງນ້ຳ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີເຫດສຸກເສີນ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 42 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງອາດດຳເນີນດ້ວຍຮູບການໃດໜຶ່ງດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ.
2. ການແກ້ໄຂທາງດ້ານບໍລິຫານ.
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.
4. ການຕັດສິນຂອງສານ.
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 43 ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ

ກໍລະນີຂໍ້ຂັດແຍ່ງຂອງບຸກຄົນ, ນິຕິບຸກຄົນ ເຊິ່ງມີຜົນມາຈາກການເກີດອັກຄີໄພ, ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ສາມາດເຂົ້າຮ່ວມຮັບຟັງ ແລະ ຢັ້ງຢືນຮ່ວມກັບໜ່ວຍໄກ່ເກ່ຍຂັ້ນບ້ານ, ຖ້າຫາກບໍ່ສາມາດໄກ່ເກ່ຍສຳເລັດຢູ່ຂັ້ນບ້ານ, ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງໄດ້ຢັ້ງຢືນຜົນເສຍທີ່ເກີດຂຶ້ນໃຫ້ຜູ້ຖືກເສຍຫາຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 44 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພຈະໄດ້ຮັບການຍ້ອງຍໍ ປະຕິບັດນະໂຍບາຍອື່ນໆ ຕາມກົດໝາຍ;

ສຳລັບພາຫະນະ, ອຸປະກອນມອດໄຟ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ນຳໃຊ້ເປັນກໍລະນີພິເສດ, ຖ້າຫາກເກີດຄວາມເສຍຫາຍ ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຈະສະເໜີຂັ້ນເທິງເພື່ອທົດແທນຄືນຕາມຜົນເສຍຫາຍຕົວຈິງ.

### ມາດຕາ 45 ມາດຕະການຕໍ່ຜູ້ລະເມີດ

ມາດຕະການຈັດຕັ້ງປະຕິບັດຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ມີຄື:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດນິຕິກຳ, ຈະຖືກສຶກສາອົບຮົມ, ກ່າວເຕືອນ ປະຕິບັດມາດຕະການທາງວິໄນ, ທາງແພ່ງ ຫຼື ຖືກດຳເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີໜັກ ຫຼື ເບົາ;

2. ບຸກຄົນໃດເຮັດໃຫ້ໄຟໄໝ້ເຮືອນ, ຕຶກ, ອາຄານ ສາງເຄື່ອງຫ້າງຮ້ານຂອງຜູ້ອື່ນ, ຜົນລະປູກ ຫຼື ຊັບສິນອື່ນ ທີ່ຖືກເສຍຫາຍ ຍ້ອນຄວາມປະໝາດ, ຍ້ອນຄວາມເລີນເລີ້ ຈະຖືກດຳເນີນຄະດີຕາມມາດຕາມກົດໝາຍ;

3. ພະນັກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຫາກໄດ້ປະລະໜ້າທີ່, ເມີນເສີຍ, ບໍ່ປະຕິບັດຄຳສັ່ງໃນເວລາເກີດເຫດການອັກຄີໄພ ຈະຖືກດຳເນີນຄະດີຕາມກົດໝາຍ;

4. ບຸກຄົນໃດທີ່ມີໜ້າທີ່ຮັບຜິດຊອບ ໃນການຈຳໜ່າຍນ້ຳປະປາ ຫາກໄດ້ຕັດການຈຳໜ່າຍນ້ຳປະປາໂດຍບໍ່ມີເຫດຜົນ ໃນເວລາມີເຫດການອັກຄີໄພເກີດຂຶ້ນຈະຖືກດຳເນີນຄະດີຕາມກົດໝາຍ;

5. ບຸກຄົນໃດຫາກກີດຂວາງການຈະລາຈອນດ້ວຍພາຫະນະ, ວັດຖຸສິ່ງຂອງ, ເຮັດໃຫ້ຫຍຸ້ງຍາກໃນການປະຕິບັດໜ້າທີ່ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ, ລົດມອດໄຟຈະຖືກດຳເນີນຄະດີຕາມກົດໝາຍ

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງ ສະຫວັນນະເຂດເປັນຜູ້ຄຸ້ມຄອງຢ່າງລວມສູນໂດຍມອບໃຫ້,ກອງບັນຊາການ ປກສ ແຂວງ, ເມືອງ, ນະຄອນ, ບ້ານເປັນຜູ້ຮັບຜິດຊອບໂດຍກົງ ແລະ ທັງເປັນໃຈກາງໃນການປະສານສົມທົບກັບຄະນະກຳມະການຕ່າງໆ ທີ່ກ່ຽວຂ້ອງຂັ້ນແຂວງ, ອຳນາດການປົກ ຄອງນະຄອນ, ເມືອງ ແລະ ບ້ານ ພ້ອມກັນຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

**ມາດຕາ 47 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ພິມລົງຈົດໝາຍທາງລັດຖະການ 30 ວັນເປັນຕົ້ນໄປ;

ຂໍ້ກຳນົດ, ບົດບັນຍັດ, ລະບຽບການສະບັບໃດທີ່ປະກາດໃຊ້ໃນເມື່ອກ່ອນກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ພາຍໃນແຂວງ ສະຫວັນນະເຂດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ອນແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ແຂວງ ສະຫວັນນະເຂດ

**ບຸນໃຈມ ອຸບົນປະເສີດ**